ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກໝາກແຕງກວາ

(ສະບັບທົດລອງ)



ຂຽນໂດຍ: ທ່ານ ຄຳພັນ ສຸວົງສາ
ຂໍ້ມູນຈາກ: ບ້ານນາຍາງ,ເມືອງ ນາຊາຍທອງນະຄອນຫຼວງວຽງຈັນ

ປີ 2006

PDF created with pdfFactory Pro trial version www.pdffactory.com

# ປື້ມຄວາມຮູ້ພູມປັນຍາທ້ອງຖິ່ນ

# "ການປູກໝາກແຕງກວາ"


ແຕ້ມໂດຍ: ທ້າວ ໂຕ້

ຮີບໂຮມ ແລະ ຈັດໜ້າໂດຍ: ນາງ ແສງແກ້ວ ໄພທຸມພອນ

ຜູ້ຮຽບຮຽງ : ອ.ຈ ໂພໄຊ ຈັນທະວົງສາ
ອ.ຈ ເກດມະນີ ບັນດາສັກ
ອ.ຈ ຄຳໄຫວ
ອ.ຈ ລັ່ງ ແສງດາດາ
ອ.ຈ ທອງຂັນ

ເຈົ້າຂອງ : ພະແນກສຶກສານະຄອນຫຼວງວຽງຈັນ ແລະ
ສູນອົບຮົມຮ່ວມພັດທະນາ


PDF created with pdfFactory Pro trial version www.pdffactory.com

# ຄຳນຳ

ປື້ມພູມປັນຍາທ້ອງຖິ່ນຫົວນີ້ ໄດ້ມາຈາກການຂຽນຂອງຊາວບ້ານແລະ ອາສາສະໝັກຊຶ່ງໄດ້ຮຽບຮຽງເບື້ອງຕົ້ນຈາກຄະນະອຳນວຍການສູນອົບຮົມຮ່ວມພັດທະນາແລະພະແນກສຶກສານະຄອນຄອນຫຼວງວຽງຈັນ.

ປື້ມຫົວນ້ອຍຫົວນີ້ ໄດ້ບັນຈຸເອົາເນື້ອໃນທີ່ເວົ້າເຖິງຫົວຂໍໃດໜຶ່ງໂດຍມີຫຼາຍກິດຈະກຳທີ່ຈະເປັນການທົດລອງເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາ ແລະ ສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍສອນຊັ້ນ ປໍ1 ປໍ 2 ແລະ ບົດທີ່ຍາກກໍສອນຊັ້ນໃຫຍ່ຂຶ້ນໄປ.

ຄະນະຈັດທຳຄິດວ່າປື້ມຫົວນີ້ຄົງເປັນບ່ອນອີງອັນໜຶ່ງໃຫ້ແກ່ຄູອາຈານກໍຄືອາສາສະໝັກທີ່ຈະໄປສອນເດັກປະຖົມບໍ່ຫຼາຍກໍໜ້ອຍ.

ຄະນະຈັດທຳຄິດວ່າຍັງມີຫຼາຍເນື້ອໃນທີ່ຍັງບໍ່ທັນພຽງພໍ ແລະຂາດໄປຫັວງວ່າຄົງໄດ້ຮັບການຕິຊົມຈາກທຸກທ່ານພວກເຮົາພ້ອມທີ່ຈະປັບປຸ່ງນຕາມຄວາມເໝາະສົມ.

ຄະນະຈັດທຳ

PDF created with pdfFactory Pro trial version www.pdffactory.com

## ຄວາມເປັນມາ

ໝາກແຕງກວາ ເປັນພືດລົ້ມລຸກຊະນິດໜຶ່ງ ທີ່ມີຄຸນຄ່າທາງອາຫານ, ປະຊາຊົນລາວເຮົາກໍໄດ້ປູກໝາກແຕງກວາມາແຕ່ບູຮານນະການແລ້ວ ໝາກແຕງກວາເປັນພືດທີ່ສາມາດປູກໄດ້ເກືອບທຸກໆປີຂອງທຸກແຂວງ ໃນປະເທດເຮົາ. ໝາກແຕງກວາມີຫຼາຍຊະນິດ ຫຼາຍແນວພັນ, ບາງ ແນວພັນມີເຄືອ,ໃບ ແລະ ອອກດອກໄດ້ຢ່າງໄວວາການສືບພັນແມ່ນ ເກີດດ້ວຍແກ່ນຂອງມັນ

PDF created with pdfFactory Pro trial version www.pdffactory.com

## ຂັ້ນຕອນ

ກ່ອນຈະປູກໝາກແຕງກວາຕ້ອງມີແນວພັນດີກຽມພ້ອມ,ດິນທີ່ເຮົາຈະໃຊ້ປູກຄວນເປັນດິນທີ່ຖືກໄຖປະໄວ້ ປະມານ 1 ອາທິດ ເພາະວ່າໄລຍະນີ້ດິນຈະຖືກແສງແດດເຜົາເອົາເຊື້ອໂລກທີ່ຈະເຮັດໃຫ້ຮາກຂອງເຄືອໝາກແຕງເນົ່າໄດ້.





PDF created with pdfFactory Pro trial version www.pdffactory.com

ສິ່ງທີ່ບໍ່ຄວນລືມບ່ອນທີ່ເຮົາຈະປູກຕ້ອງມີນ້ຳຮັບໃຊ້ຕະຫຼອດລະດູການ ໝາກແຕງເປັນພືດທີ່ຕ້ອງການນ້ຳຫຼາຍ ຖ້າຂາດນ້ຳໄປໄລຍະໜຶ່ງ ໝາກແຕງໝາກແຕງກໍຈະຄອດ ແລະ ໃຫ້ຜົນຜະລິດບໍ່ໄດ້ຕາມຄວາມ ຕ້ອງການ, ການບົວລະບັດຮັກສາກໍເປັນສິ່ງທີ່ບໍ່ຄວນລືມ ເພາະບົວລະ ບົດດີມັນກໍຈະອອກຜົນຕາມຄວາມຕ້ອງການ.ຖ້າເຮົາເອົາໃຈໃສ່ບົວລະ ບັດໃສ່ຝຸ່ນມີຢາປາບສັດຕູພືດ, ຄວນເລືອກໃສ່ຝຸ່ນຄອກ ແລະ ຢາສີດ ທີ່ມີເຄມີໜ້ອຍທີ່ສຸດ. ໝາກແຕງກວາເປັນພືດປູກງ່າຍໃຫຍ່ໄວ້ໃຫ້ຜົນ ຜະລິດສູງໃຊ້ເວລາສັ້ນ ໃນການປູກ. ໝາກແຕງເປັນພືດທີ່ມີຄົນນິຍົມ ປູກ ແລະ ກິນເປັນຈຳນວນຫຼາຍ, ເພາະການປູກໝາກແຕງເປັນການ ສ້າງເສດຖະກິດຄອບຄົວໄດ້ດີ. ນອກຈາກນີ້ມັນຍັງສາມາດປຸງແຕງ ອາຫານໄດ້ຫຼາຍຊະນິດບໍ່ວ່າຈະເປັນອາຫານຫວານຄາວ





PDF created with pdfFactory Pro trial version www.pdffactory.com

## ຄຸນປະໂຫຍດ

ການປູກໝາກແຕງນັບວ່າມີຄຸນປະໂຫຍດໃຫ້ແກ່ເຮົາຫຼາຍເພາະເປັນພືດເສດຖະກິດທີ່ປູກງ່າຍ,ໃຫຍ່ໄວ,ຂາຍໄດ້ລາຄາດີ ແລະ ທີ່ສຳຄັນເປັນການລົງທຶນທີ່ບໍ່ຫຼາຍ, ຖ້າເຮົາກິນຫຼາຍມັນຈະສາມາດທົດແທນການຂາດນ້ຳໃນຮ່າງກາຍໄດ້ ແລະ ຍັງເຮັດໃຫ້ຜິວພັນຊຸ່ມງາມ.



PDF created with pdfFactory Pro trial version www.pdffactory.com

## ພາບ: ຊ່ວຍປູກໝາກແຕງກວາ

| | |
|---|---|
| ມາເດີເຈົ້າ | ນ້ອຍໜຸ່ມຍິງຊາຍ |
| ຄົນທັງຫຼາຍ | ໄປມາຫາສູ່ |
| ມາເດີໝູ່ | ໄປປູກໝາກແຕງ |
| ມາຮ່ວມແຮງ | ຊ່ວຍພັດທະນາ |

## ເຊື້ອງ: ເຊີນຊວນມາປູກໝາກແຕງກວາ

| | |
|---|---|
| ມາພສກເຮົາມາ | ມາປູກໝາກແຕງ |
| ລົງທຶນບໍ່ແພງ | ໝາກແຕງກໍງາມ |
| ໃຜໃຜກໍຖາມ | ໝາກແຕງງາມແທ້ |
| ຜູ້ເຖົ້າຜູ້ແກ່ | ໜ້າຕາສົດໃສ |
| ຍ້ອນເພິ່ນນັ້ນໄດ້ | ກິນໝາກແຕງກວາ |

PDF created with pdfFactory Pro trial version www.pdffactory.com

## ເພງ: ສົ່ງເສີມການປູກໝາກແຕງກວາ

ພວກພີ່ນ້ອງ ຊາວບ້ານຂອງເຮົາ
ພວກໜຸ່ມສາວ ຮີບມາໄວໄວ
ເອົາໃຈໃສ່ ເລື່ອງປູກເລື່ອງຝັງ
ການປູກນັ້ນ ຍ່ອມມີປະໂຫຍດ
ບໍ່ເກີດໂທດ ເກີດພິດເກີດໄພ
ເອົາໃຈໃສ່ ເພີ່ມພູນຜະລິດ
ຄິດເອີຍຄິດ ຈະປູກສິ່ງໃດ
ສິ່ງຄິດໄວ້ ຄືປູກໝາກແຕງກວາ

PDF created with pdfFactory Pro trial version www.pdffactory.com

## ຮູບ ແລະ ປະຫວັດຂອງຜູ້ຂຽນ



ຊື່ ທ່ານ ຄໍາພັນ

ນາມສະກຸນ ສຸວົງສາ

ອາຍຸ 34 ປີ

ອາຊີບ ປະຊາຊົນ

## ເຫດຜົນຂອງຜູ້ຂຽນບົດ:

ຍ້ອນຂ້າພະເຈົ້າຢາກໃຫ້ຄົນຮຸ່ນໃໝ່ແລະນໍາໄປສຶກສາ,ໝາກແຕງເປັນພືດທີ່ປູກງ່າຍ. ຖ້າເປັນກໍສາມາດລຸດຜ່ອນການໃຊ້ຈ່າຍໃນຄອບຄົວແລະ ຖ້າປູກຫຼາຍກໍສາມາດນໍາໄປຂາຍ ແລະ ສ້າງລາຍໄດ້ໃຫ້ຄອບຄົວ ແລະ ທີ່ສໍາຄັນຍັງຄອງກັບຄໍາເວົ້າຂອງພັກເຮົາທີ່ວ່າ " ລາວເຮັດລາວໄດ້ ລາວໃຊ້ລາວຈະເລີນ "

PDF created with pdfFactory Pro trial version www.pdffactory.com